# ໂຮງຮຽນວັນອາທິດ

# ວັນອາທິດ ທີ 17 ມີນາ 2019 (03-17-2019 )

## ບັນຫາເລື່ອງສະຕິປັນຍາ

*ເມື່ອໃດທີ່ທ່ານເຫັນສາມັນສຳນຶກໃຫ້ຄວາມຮູ້ສຶກດີກວ່າຄວາມຮູ້ສຶກທີ່ຢູ່ໃນປຶ້ມ?*

**ຈັດສຳຄັນໃນບົດຮຽນນີ້:** ສະຕິປັນຍາເປັນພື້ນຖານໃນການເຊື່ອວາງໃຈໃນພຣະເຈົ້າ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ການຕໍ່ສູ້ທາງທະຫານ. ສົງຄາມກາງເມືອງ. ຣັຖບານທຸຈຣິດ. ຄົນຕິດຢາເສບຕິດ. ການແຈ້ງຂ່າວໄດ້ເຕືອນເຮົາໃຫ້ຮູ້ຢູ່ຕລອດວ່າໂລກຂອງເຮົາກຳລັງຈະຈົບລົງດ້ວຍຄວາມຫຼົ້ມເຫຼວ. ແຕ່ພວກເຮົາສາມາດເຮັດຫັຍງໄດ້ແດ່? " ການສຶກສາເປັນຄຳຕອບ!" ພວກເຮົາໄດ້ຍິນເຣື່ອງນີ້ຢູ່ເລື້ອຍໆ. ຖ້າພວກເຮົາເປັນຄົນມີຄວາມຮູ້ມີການສຶກສາ, ເຮົາຈະຮຽນຮູ້ທີ່ຈະເອົາຊະນະຄວາມເສັຽຫາຍຂອງພວກເຮົາ. ການສຶກສາຈະເຮັດໃຫ້ຄວາມຄິດຂອງເຮົາຖືກຕ້ອງ ແລະເອົາຊະນະຄວາມກຽດຊັງເຊື້ອຊາດເຜົ່າພັນ, ຊະນະອາຣົມຮຸນແຮງ ແລະເອົາຊະນະການຕິດຢາເສບຕິດ. ການສຶກສາເຮັດໃຫ້ເຮົາເປັນເພື່ອນກັນກັບຄົນອື່ນໄດ້ ແລະກັບຕົວເຮົາເອງດ້ວຍ.

ຖ້າທັສນະແນວຄວາມຄິດຂອງທ່ານແມ່ນຄົນນັ້ນທີ່ເປັນພື້ນຖານທີ່ດີ. ຈາກນັ້ນການສຶກສາອາດເບິ່ງເໝືອນວ່າເປັນເຫດຜົນທີ່ແກ້ບັນຫາ: ຄົນດີສາມາດໃຊ້ຄວາມຄິດເລືອກອັນໃດເປັນສິ່ງທີ່ດີແລະອັນໃດເປັນສິ່ງທີ່ຖືກຕ້ອງ. ໜ້າເສັຽດາຍ, ນັ້ນມັນບໍ່ແມ່ນບັນຫາ; ແນ່ນອນມັນບໍ່ແມ່ນມຸມມອງຂອງພຣະຄັມພີ. ພຣະຄັມພີໄດ້ເຕືອນເຮົາວ່າຄວາມບາບແລະການກະບົດຕໍ່ສູ້ຂອງເຮົານັ້ນເປັນຮາກເຫງົ້າບັນຫາຂອງໂລກ. ການສຶກສານັ້ນມັນເປັນຜົນປໂຍດທີ່ໄວ້ໃຈໄດ້, ແຕ່ມັນສາມາດເຮັດໄດ້ເທົ່າທີ່ເຮັດໄດ້. ອັນທີ່ເຮົາຕ້ອງການແມ່ນປັນຍາທີ່ມາຈາກພຣະເຈົ້າ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

### ສຶກສາພຣະຄັມພີ

### 1. <u>ປັນຍາຈານ 2:12-17</u>

*[12]ຂ້າພະເຈົ້າຈຶ່ງຫັນມາພິຈາຣະນາສະຕິປັນຍາ ຄວາມບ້າ ແລະຄວາມໂງ່ຈ້າ ເພາະຄົນທີ່ມາພາຍຫລັງກະສັດຈະເຮັດ*
*ຫຍັງໄດ້ແດ່ ລາວກໍເຮັດສິ່ງທີ່ລາວເຮັດມາດົນແລ້ວນັ້ນໄດ້. [13]ຂ້າພະເຈົ້າເຫັນວ່າສະຕິປັນຍາວິເສດກວ່າຄວາມໂງ່ຈ້າ*
*ເໝືອນກັບຄວາມສະຫວ່າງວິເສດກວ່າຄວາມມືດ. [14]ຄົນມີສະຕິປັນຍາກໍມີຕາຢູ່ໃນສມອງ ແຕ່ຄົນໂງ່ຍ່າງຢູ່ໃນຄວາມ*
*ມືດ ເຖິງປານນັ້ນ ຂ້າພະເຈົ້າຍັງເຫັນວ່າ ເຫດການຢ່າງດຽວກັນເກີດຂຶ້ນແກ່ພວກເຂົາທັງປວງ. [15]ຂ້າພະເຈົ້າຈຶ່ງຄຶດໃນ*
*ໃຈວ່າ "ເຫດການອັນເກີດແກ່ຄົນໂງ່ສັນໃດ ກໍຈະເກີດກັບຕົວຂ້າພະເຈົ້າສັນນັ້ນ ຖ້າຢ່າງນັ້ນແລ້ວ ຂ້າພະເຈົ້າຈະມີສະຕິ*
*ປັນຍາຫລວງຫລາຍໄປເຮັດຫຍັງ? "ຂ້າພະເຈົ້າຈຶ່ງຄຶດໃນໃຈວ່າ "ເຣື່ອງນີ້ກໍບໍ່ໄດ້ຜົນຄືກັນ".[16]ເພາະຕລອດໄປ ບໍ່ມີໃຜ*
*ລະນຶກເຖິງຄົນມີສະຕິປັນຍາຫລາຍກວ່າຄົນໂງ່ ດ້ວຍເຫັນວ່າໃນອະນາຄົດກໍລືມກັນໝົດແລ້ວ ແລ້ວຄົນມີສະຕິປັນຍາ*
*ກໍຕາຍເໝືອນກັບຄົນໂງ່. [17]ຂ້າພະເຈົ້າຈຶ່ງກຽດຊັງຊີວິດ ເພາະວ່າການງານທີ່ເຂົາເຈົ້າເຮັດກັນພາຍໃຕ້ດວງຕາເວັນກໍ່*
*ຄວາມເສົ້າສລົດໃຈໃຫ້ແກ່ຂ້າພະເຈົ້າ ເພາະສິ່ງສາລະພັດກໍລ້ວນແຕ່ບໍ່ໄດ້ຜົນ ຄືກິນລົມກິນແລ້ງ.*

ບໍ່ມີໃຜໃນໂລກນີ້ມີຄວາມສລາດຫຼາຍກວ່າໂຊໂລໂມນ, ດັ່ງນັ້ນ, ການສຳຣວດເພື່ອຄົ້ນໃຫ້ພົບຄວາມໝາຍໃນຊີວິດຂອງລາວ, ມັນບໍ່ໄດ້ເຮັດໃຫ້ເປັນເຣື່ອງປລາດໃຈທີ່ໂຊໂລໂມນຍອມຮັບ " ພິຈາຣະນາເບິ່ງປັນຍາ, ຄວາມບ້າ, ແລະຄວາມໂງ່ຈ້າ." ຂໍ້ 12 ແມ່ນຍາກທີ່ຈະອະທິບາຍໃຫ້ເຂົ້າໃຈ. " ກະສັດຈະເຮັດຫຍັງແດ່ໃຫ້ສຳເຣັດ? ລາວກໍເຮັດສິ່ງທີ່ລາວເຮັດມາແລ້ວ," ພວກເຮົາສາມາດເຂົ້າໃຈຂໍ້ຄວາມນີ້ໃນສອງວິທີທາງ.

- ບໍ່ວ່າຈະເປັນກະສັດຜູ້ໃດທີ່ມາພາຍຫຼັງໂຊໂລໂມນ, ລາວຈະປະເຊີນກັບບັນຫາອັນດຽວກັນ.
- ນັບຕັ້ງແຕ່ໂຊໂລໂມນເປັນຜູ້ສລຽວສລາດໃນໂລກ, ບໍ່ມີກະສັດອົງໃດທີ່ມາພາຍຫຼັງລາວທີ່ສາມາດເຮັດໄດ້ດີກວ່າ.

ຄຳອະທິບາຍທັງສອງສາມາດເຂົ້າໃຈໄດ້, ແລະເປັນຈຸດປະສົງທີ່ເປັນຈຸດຢືນດ້ວຍຢ່າງໃດຢ່າງນຶ່ງ: ຜູ້ມາກໍຕາມມາພາຍຫຼັງໂຊໂລໂມນຈະເຮັດບໍ່ດີໃນການພະຍາຍາມອະທິບາຍໂລກຜ່ານທາງສະຕິປັນຍາມະນຸດ; ລາວອາດຈະເຮັດດີເໝືອນຢ່າງໂຊໂລໂມນໄດ້ເຮັດ.

ແຕ່ປັນຍາທີ່ຄິດຖືກຕ້ອງກໍນຳພາໃຫ້ດຳລົງຊີວິດຖືກຕ້ອງ. ສະຕິປັນຍາແລະການດຳລົງຊີວິດທີ່ຊອບທັທເປັນເໝືອນລົມຫາຍໃຈຮ່ວມກັນ. ການສິນທະນາ, ຄວາມໂງ່ຈ້າເປັນຜົນສະທ້ອນໃນການດຳລົງຊີວິດບໍ່ຊອບທັມ.ໂຊໂລໂມນຍອມຮັບການກວດສອບຫາຄວາມຈິງທີ່ແຕກຕ່າງລະຫວ່າງປັນຍາແລະຄວາມໂງ່ຈ້າແລະລາວເປີດເຜີຍຄວາມຈິງສາມຢ່າງ.

1. **ແມ່ນໃນຊີວິດນີ້, ໄດ້ຮັບຜົນປໂຍດຈາກປັນຍາຫຼາຍກວ່າຈາກຄວາມໂງ່ຈ້າ.** ຄືກັບແສງສະຫວ່າງໄດ້ປຽບຄວາມມືດ, ດັ່ງນັ້ນ " ຄົນທີ່ສລາດມີຕາໃນຫົວຂອງລາວ" ນັ້ນແມ່ນ, ລາວສາມາດເຫັນ, " ແຕ່ຄົນໂງ່ຍ່າງຢູ່ໃນຄວາມມືດ." ໃນໂລກທີ່ມີປັນຍາມາກມາຍ, ຜົນປໂຍດອື່ນມາຈາກຄົນທີ່ມີປັນຍາ.
2. **ບໍ່ວ່າພວກເຮົາຈະມີການດຳລົງຊີວິດທີ່ດີຫຼືຊີວິດທີ່ຊົ່ວຮ້າຍ, ພວກເຮົາທັງໝົດກໍຍັງຕາຍ ແລະແລ້ວກໍຖືກລືມ.** ໃນຕອນທ້າຍ, ໂຊໂລໂມນໄດ້ເວົ້າວ່າ, ມັນບໍ່ໄດ້ຂຶ້ນຢູ່ກັບວ່າພວກເຮົາດຳລົງຊີວິດຢູ່ໃນໂລກນີ້ດີປານໃດຫຼືຊົ່ວຊ້ຳໃດເພາະຜູ້ມີປັນຍາແລະຄົນໂງ່ຈ້າ, ຄົນຊອບທັມແລະຄົນບໍ່ຊອບທັມ, ທັງໝົດກໍໄດ້ຮັບຊາຕາກັມອັນດຽວກັນ: ຄວາມຕາຍ! ສະຕິປັນຍາອາດໝາຍເຖິງການດຳລົງຊີວິດທີ່ດີ, ແລະອາດມີຊີວິດທີ່ຍືນຍາວຢູ່ຫຼາຍປີ, ແຕ່ກໍຍັງຕາຍ, ໃນວາລະສຸດທ້າຍ, ພວກເຮົາກໍຕາຍ.
3. **ພະຍາຍາມດຳລົງຊີວິດຢູ່ໃນຄວາມຊອບທັມ ຊີວິດທີ່ແຍກຈາກພຣະເຈົ້າກໍນຳເຮົາໄປສູ່ຄວາມບໍ່ພໍໃຈແລະເສົ້າໂສກ.** ເມື່ອທ່ານພິຈາຣະນາເບິ່ງຊາຕາກັມຂອງມະນຸດ, ບໍ່ວ່າທ່ານຈະດຳລົງຊີວິດຢູ່ໃນທາງທີ່ດີຫຼືທາງທີ່ຊົ່ວຮ້າຍ, ແມ່ນຫຍັງຄືຈຸດປະສົງ? ບໍ່ມີຈຸດປະສົງ ແລະບໍ່ເກີດຜົນທັງໝົດນີ້ອາດເຮັດໃຫ້ບາງຄົນເປັນເໝືອນໂຊໂລໂມນເບື່ອໜ່າຍຊີວິດ. ຈາກທັສນະແນວຄວາມຄິດທີ່ບໍ່ປົນກັບຄວາມຄິດທາງໂລກ, ຊຶ່ງບໍ່ໄດ້ເຮັດໃຫ້ມີຄວາມແຕກຕ່າງພວກເຮົາຈະໃຊ້ຊີວິດນີ້ຢູ່ໃດ້ຢ່າງໃດຖ້າພວກເຮົາບໍ່ສາມາດໜີພົ້ນຄວາມຕາຍນີ້ໄດ້.

## 2. <u>ປັນຍາຈານ 7:23-25</u>

*23ບັນດາຂໍ້ຄວາມເຫລົ່ານີ້ຂ້າພະເຈົ້າໄດ້ພິຈາຣະນາເບິ່ງດ້ວຍໃຊ້ສະຕິປັນຍາແລ້ວ: ຂ້າພະເຈົ້າກ່າວວ່າ "ຂ້າພະເຈົ້າຈະໄດ້ປັນຍາ" ແຕ່ປັນຍານັ້ນກັບຢູ່ຫ່າງໄກຈາກຂ້າພະເຈົ້າ. 24 ສິ່ງທີ່ຢູ່ໄກ ແລະເລິກເຫລືອເກີນແມ່ນຜູ້ໃດຈະຄົ້ນອອກມາໄດ້? 25ໃຈຂ້າພະເຈົ້າຫວນກັບຄືນມາຮຽນຮູ້ແລະຊອກຫາ ພ້ອມທັງສແວງຫາສະຕິປັນຍາ ແລະມູນເຫດຂອງສິ່ງຕ່າງໆເພື່ອໃຫ້ຮູ້ຄວາມຊົ່ວຮ້າຍແຫ່ງຄວາມໂງ່ຈ້າ ຄືຄວາມໂງ່ຈ້າ ແລະຄວາມບ້າບໍ.*

ເຖິງຈະໃຫ້ປໂຍດເທົ່າກັນທັງໝົດ, ປັນຍາມະນຸດບໍ່ສາມາດໃຫ້ຄຳຕອບຕໍ່ຄຳຖາມທີ່ເປັນຈຸດສຸດຍອດຂອງຊີວິດ. ຈາກຄວາມຄິດເຫັນທາງໂລກ ສັງເກດເບິ່ງຊີວິດທີ່ດຳລົງຢູ່ " ພາຍໃຕ້ດວງຕາເວັນ" ປັນຍາຂອງມະນຸດບໍ່ສາມາດອະທິ

ບາຍ: ຊຶ່ງມີໄຫວພິກອອກແບບຂອງໂລກແລະມະນຸດ, ຈັດຣະບຽບທີ່ຄັດຄ້ານຕໍ່ຄວາມຫຍຸ້ງຍາກ, ຄວາມຄິດຫຼືກິຈກັມທີ່ສລັບຊັບຊ້ອນຂອງການອອກແບບຮ່າງກາຍມະນຸດ, ຫຼືຄວາມຄິດເຊັ່ນ ຮັກຫຼືຊົມຊື່ນຍິນດີ.

ໂຊໂລໂມນຕັດສິນໃຈໃຊ້ວິທີທົດສອບ " ບັນຫາທັງໝົດນີ້ດ້ວຍປັນຍາ." ໃນຄຳເວົ້າອີກຢ່າງນຶ່ງ, ລາວໃຊ້ສະຕິປັນຍາມະນຸດເພື່ອທົດສອບສິ່ງທີ່ລາວເຫັນແລະສິ່ງທີ່ລາວປະສົບຢູ່ອ້ອມຮອບລາວ. ແມ່ນ, ລາວຈຳຕ້ອງຍອມຮັບ, " ມັນຢູ່ເໜືອຄວາມຄິດຂ້າພະເຈົ້າ." ການດຳລົງຢູ່ໃນໂລກກັບຄວາມສລັບຊັບຊ້ອນທັງໝົດແມ່ນ " ທີ່ຢູ່ເໜືອກວ່າຈະເອື້ອມໄປເຖິງແລະຫ່າງໄກທີ່ສຸດ" ເມື່ອລາວພະຍາຍາມອະທິບາຍດ້ວຍປັນຍາມະນຸດເທົ່ານັ້ນ.

ຈົ່ງສັງເກດເບິ່ງວິທີການສື່ສານທີ່ໂຊໂລໂມນໃຊ້ໃນຂໍ້ 25: ລາວພະຍາຍາມທີ່ຈະ " ຮູ້, ສຳຣວດ, ແລະພິຈາຣະນາ." ສິ່ງເຫຼົ່ານີ້ເປັນຄຳເວົ້າຢ່າງຮອບຄອບ. ໂຊໂລໂມນລະມັດລະວັງພະຍາຍາມທີ່ຈະເຂົ້າໃຈ ແລະອະທິບາຍທັງໝົດດ້ວຍປັນຍາມະນຸດ. ນີ້ບໍ່ແມ່ນພຽງແຕ່ເປັນການດຳເນີນການໃນບາງຄັ້ງບາງຄາວເທົ່ານັ້ນ. ລາວທຸ້ມເທກັບສິ່ງເຫລົ່ານີ້, ແຕ່ພວກມັນກໍຢູ່ເໜືອຄວາມເຂົ້າໃຈຂອງລາວ.

ບໍ່ເປັນພຽງແຕ່ສິ່ງທີ່ດີທີ່ປັນຍາຂອງໂລກບໍ່ສາມາດຈະອະທິບາຍໄດ້. ສະຕິປັນຍາມະນຸດກໍຍັງບໍ່ສາມາດອະທິບາຍໄດ້ຄືກັນເຊັ່ນ " ຄວາມໂກດຮ້າຍ." ປັນຍາມະນຸດອາດ " ຮູ້" ໄດ້ພຽງແຕ່ວ່າຄວາມໂກດຮ້າຍເປັນສິ່ງທີ່ໂງ່ຈ້າເປັນຄວາມຄິດທີ່ປລາດ," ແຕ່ບໍ່ສາມາດອະທິບາຍໄດ້ວ່າເປັນດ້ວຍເຫດໃດ.

ຊີວິດ " ພາຍໃຕ້ດວງຕາເວັນ" (ປັນຍາຈານ 2: 17) ແລະປັນຍາທີ່ແຍກອອກຈາກພຣະເຈົ້າຕ້ອງຊີ້ບອກວ່າທຸກຄົນເປັນຄົນດີ, ແຕ່ສະພາບແວດລ້ອມ, ຂາດການສຶກສາ, ຫຼືອັນນຶ່ງຄືການບໍ່ມີຕົວຕົນຂອງສັງຄົມໄດ້ເພີ້ມຄວາມຫາຍະນະໃຫ້ເຂົາ. ເຖິງແມ່ນວ່າມີການສຶກສາສູງຄົນກໍຍັງດຳລົງຊີວິດຢູ່ໃນຄວາມຄິດສະພາບແວດລ້ອມສັງຄົມເຮັດສິ່ງທີ່ຊົ່ວ, ແລະສັງຄົມໂລກສ້າງຄວາມວິຕົກກັງວົນໃຈໄວ້ວ່າເປັນດ້ວຍເຫດໃດ.

## 3 <u>ປັນຍາຈານ 7:26-29</u>

[26]ຂ້າພະເຈົ້າໄດ້ພົບອີກສິ່ງໜຶ່ງ ຊຶ່ງຂົມຂື່ນຫລາຍກວ່າຄວາມຕາຍ ຄືຜູ້ຍິງທີ່ມີໃຈເປັນບ້ວງແຮ້ວ ແລະແຮ້ວມືຂອງນາງ
ເປັນໂສ້ເຫລັກ ຄົນໃດເປັນທີ່ພໍພຣະທັຍພຣະເຈົ້າ ຄົນນັ້ນຈະໜີພົ້ນນາງ ແຕ່ຄົນບາບຈະຖືກຜູ້ຍິງຄົນນັ້ນຈັບເອົາໄປ.
[27]ປັນຍາຈານກ່າວວ່າ ເບິ່ງແມ ຂ້າພະເຈົ້າພົບດັ່ງຕໍ່ໄປນີ້ ໂດຍເອົາເຣື່ອງໜຶ່ງມາປະດິດຕິດຕໍ່ເຂົ້າກັບອີກເຣື່ອງໜຶ່ງເພື່ອ
ຫາມູນເຫດ [28]ຊຶ່ງຈິດໃຈຂອງຂ້າພະເຈົ້າຍັງກຳລັງຫາແລ້ວຫາອີກ ແຕ່ຂ້າພະເຈົ້າຫາບໍ່ພົບ ໃນຜູ້ຊາຍພັນຄົນຈະພົບຜູ້
ຊາຍແທ້ຈັກຄົນໜຶ່ງ ແຕ່ຈະຫາຜູ້ຍິງແທ້ຈັກຄົນໜຶ່ງໃນຈຳນວນຜູ້ຍິງພັນຄົນ ກໍຫາບໍ່ພົບ. [29]ເບິ່ງແມ ຂ້າພະເຈົ້າພົບແຕ່
ຄວາມນີ້ ຄືພຣະເຈົ້າສ້າງມະນຸດໃຫ້ເປັນຄົນທ່ຽງທັມ ແຕ່ມະນຸດທັງຫລາຍໄດ້ຄົ້ນຄວ້າກົນອຸບາຍຕ່າງໆອອກມາ.

ຜ່ານທາງຄຳຖາມຂອງໂຊໂລໂມນເພື່ອຄົ້ນຫາຄວາມໝາຍຊີວິດໂດຍການຕິດຕາມພິສູດສະຕິປັນຍາທີ່ພິສູດໃຫ້ເຫັນວ່າເປັນໄປບໍ່ໄດ້, ການຊອກຄົ້ນຂອງລາວໄດ້ຂໍ້ສລຸບສາມປະການ.

1. **ຄວາມບາບເປັນຜົນກະທົບສາຍສັມພັນຂອງເຮົາ.** ເມື່ອເບິ່ງຜິວເຜີນ, ໂຊໂລໂມນເບິ່ງເໝືອນວ່າຈິງຈັງຢ່າງສຸດຂີດ " ຕໍ່ສູ້- ຜູ້ຍິງ" ໃນຂໍ້ 26-28, ແຕ່ຈາກຄວາມພໍອົກພໍໃຈຜູ້ຊາຍ, ລາວດຳເນີນການຈັດການກັບບັນຫາຂໍ້ຂັດແຍ່ງລະຫວ່າງຜູ້ຊາຍແລະຜູ້ຍິງ. ດ້ວຍເຫດຜົນຂອງຄວາມບາບ, ສາຍສັມພັນຂອງການແຕ່ງງານສາມາດເຂົ້າມາແທນທີ່ຂໍ້ຂັດແຍ່ງໄດ້.
2. **ປັນຍາເປັນສິ່ງທີ່ມີຄ່າສຳລັບໂລກນີ້.** ໂຊໂລໂມນຍອມຮັບວ່າລາວໄດ້ຫາພົບກໍພຽງ " ຄົນນຶ່ງໃນພັນຄົນ" ເປັນຜູ້ທີ່ສລຽວສລາດ. ແລະ " ຄົນເຫຼົ່ານັ້ນບໍ່ມີຜູ້ຍິງ." ອີກເທື່ອນຶ່ງ, ຄຳເວົ້ານີ້ເບິ່ງເໝືອນວ່າລຳອຽງຕໍ່ສູ້ຜູ້ຍິງ, ແຕ່ຈົ່ງຄິດເບິ່ງໂຊໂລໂມນບໍ່ໄດ້ມີປະສົບການທີ່ດີກ່ຽວເຣື່ອງຜູ້ຍິງ. ໂຊໂລໂມນບໍ່ເຊື່ອຟັງຄຳສັ່ງຂອງພຣະເຈົ້າໂດຍການແຕ່ງງານກັບເມັຽນອກສາສນາຫລາຍຮ້ອຍຄົນ ( 1 ກະສັດ 11: 1- 6).

3. **ມະນຸດທຸກຄົນຖືກຄວາມບາບຄອບງໍາ.** ມີພຽງແຕ່ເມື່ອພວກເຮົາຕິດຕາມພຣະປະສົງພຣະເຈົ້າ ພວກເຮົາຈະພົບສະຕິປັນຍາທີ່ພວກເຮົາຕ້ອງການເພື່ອຕອບຄໍາຖາມຂອງຊີວິດແລະຊີວິດຊອບທັມໃນໂລກນີ້. ປັນຍາພຣະເຈົ້າເປັນຂອງພຣະຣາຊທານຈາກພຣະເຈົ້າທີ່ໃຫ້ກັບພວກເຮົາໃຫ້ເຂົ້າໃຈຄຸນລັກສະນະຂອງພຣະອົງ, ຄວາມຕັ້ງໃຈຂອງພຣະອົງ, ແລະວິທີທາງຂອງພຣະອົງ. ເມື່ອພວກເຮົາເປັນສ່ວນນຶ່ງໃນສະຕິປັນຍາຂອງພຣະອົງ, ການສະແດງອອກໃຫ້ເຫັນເຖິງຄວາມຊອບທັມໃນຊີວິດ.

ສະຕິປັນຍາຂອງພຣະເຈົ້າໃຫ້ຄໍາຕອບຕໍ່ທຸກບັນຫາຂອງຄວາມຊົ່ວຮ້າຍ. ເມື່ອພຣະເຈົ້າຊົງສ້າງໂລກເຫັນວ່າທຸກຢ່າງດີ, ໂຊໂລໂມນອະທິບາຍ, ພຣະອົງ " ເຮັດໃຫ້ມະນຸດເປັນຄົນທ່ຽງທັມ." ແຕ່ແທນທີ່ຈະດໍາລົງຊີວິດຢູ່ໃນຄວາມທ່ຽງທັມແລະຕິດຕາມພຣະເຈົ້າ, ອາດາມແລະເອວາຕິດຕາມຄວາມບາບຂອງເຂົາ ເຂົາວາງແຜນທີ່ຈະເປັນເໝືອນພຣະເຈົ້າ. ແລະໃນທຸກວັນນີ້ພວກເຮົາກໍສືບຕໍ່ເຮັດຕາມຄວາມໂງ່ ແລ່ນໄລ່ຕິດຕາມແຜນການໂງ່ຂອງຕົນເອງ.

ແຕ່ເຣື່ອງນີ້ຍັງບໍ່ຈົບ! ພຣະເຈົ້າເຂົ້າມາໃນໂລກເພື່ອທີ່ຈະເອົາເຮົາກັບຄືນມາຫາພຣະອົງ. ສະຕິປັນຍາທີ່ພວກເຮົາຕ້ອງການມາຈາກການຕິດຕາມພຣະເຈົ້າຜ່ານທາງຄວາມເຊື່ອໃນພຣະເຢຊູ, ແລະສະຕິປັນຍານັ້ນນໍາພາເຮົາໃຫ້ດໍາເນີນຊີວິດໃນຄວາມຊອບທັມ.

.

## ນໍາໃຊ້ໃນຊີວິດ.

ເມື່ອເຮົາຕິດຕາມພຣະເຈົ້າ, ພຣະອົງສັນຍາທີ່ຈະປະທານສະຕິປັນຍາທີ່ພວກເຮົາຕ້ອງການນັ້ນໃຫ້ ເພື່ອຈະດໍາລົງຊີວິດໃນຄວາມຊອບທັມ. ພວກເຮົາຈະຕິດຕາມພຣະເຈົ້າຢ່າງໃດໃນອາທິດນີ້? ຈົ່ງພິຈາຣະນາເບິ່ງນຶ່ງຂັ້ນຕອນໃນຄໍາແນະນໍາຂ້າງລຸ່ມນີ້.

- **ຈົ່ງພິຈາຣະນາເບິ່ງການຊົງສ້າງທີ່ດີຂອງພຣະເຈົ້າ.** ໃນຄືນເດືອນແຈ້ງໃນອາທິດນີ້, ອອກໄປນອກບ້ານແລະເບິ່ງດວງດາວໃນທອງຟ້າ. ອ່ານພຣະທັມປະຖົມມະການບົດ 1 ແລະ ເພງສັຣເສີນບົດ 8, ແລະຂອບພຣະຄຸນພຣະເຈົ້າໃນພຣະສະຕິປັນຍາແລະການຊົງສ້າງຂອງພຣະອົງ.

- **ຈົ່ງທ່ອງຈໍາຂໍ້ພຣະຄັມພີ.** ຈົ່ງທ່ອງຈໍາຂໍ້ພຣະຄັມພີເຊັ່ນພຣະທັມສຸພາສິດບົດ 3: 5- 6 ໃນອາທິດນີ້, ແລ້ວຄິດເບິ່ງວິທີທາງທີ່ທ່ານສາມາດຕິດຕາມພຣະເຈົ້າແລະໄວ້ວາງໃຈໃນພຣະສະຕິປັນຍາຂອງພຣະອົງ, ຫຼາຍກວ່າຄວາມວາງໃຈໃນຕົວເອງ.

- **ຈົ່ງມີການສົນທະນາ.** ໃຊ້ເວລາກັບເພື່ອນທີ່ບໍ່ມີຄວາມເຊື່ອ, ແລະຖາມເຂົາວ່າເຂົາຈະອະທິບາຍບັນຫາທາງໂລກແລະທັມະຊາດຂອງຄວາມບາບແລະຄວາມຊົ່ວຊ້າຢ່າງໃດ. ໃນຂະນະທີ່ຟັງໂດຍບໍ່ຕັດສິນ ຈົ່ງອະທິຖານຫາໂອກາດທີ່ຈະແບ່ງປັນຂ່າວປະເສີດແລະປັນຍາຂອງພຣະເຈົ້າ.

ດ້ວຍຂໍ້ມູນທັງໝົດເຫັນປໂຍດແກ່ເຮົາ, ມັນເປັນການງ່າຍທີ່ຈະຮຽນດ້ວຍປັນຍາຂອງເຮົາເອງ, ໃຫ້ເຮົາຕິດຕາມພຣະເຈົ້າແລະພຣະສະຕິປັນຍາຂອງພຣະອົງຢູ່ຕລອດ. ທີ່ເປັນສະຕິປັນຍາທີ່ມີຄຸນຄ່າທັງເປັນທີ່ໜ້າພໍໃຈອີກດ້ວຍ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.**